STAY SAFE MN



# ການຢຸດໃຫ້ບໍລິການຊົ່ວຄາວວັກຊີນໂຄວິດ-19 ຈອນສັນ ແອນ ຈອນສັນ: ສິ່ງທີ່ທ່ານຄວນຮູ້

ວັກຊີນໂຄວິດ-19 ຈອນສັນ ແອນ ຈອນສັນ ແມ່ນວັກຊີນທີ່ເໝາະສຳລັບ ຜູ້ທີ່ມີອາຍຸ 18 ປີ ຂຶ້ນໄປ. ທ່ານຕ້ອງສັກວັກຊີນ ຈອນສັນ ແອນ ຈອນສັນ ພຽງແຕ່ໂດສດຽວເທົ່ານັ້ນ ເພື່ອປ້ອງກັນໂຄວິດ-19.

## ກ່ຽວກັບການຢຸດຊົ່ວຄາວ

ການສັກຢາວັກຊີນຈອນສັນ ແອນ ຈອນສັນ ຖືກຢຸດໄວ້ຊົ່ວຄາວ ແມ່ນເພື່ອສຶກສາວິທີການກວດ ແລະ ປິ່ນປົວບັນຫາການແຂງຕົວຂອງເລືອດ. ໃນໄລຍະທີ່ມີການຢຸດຊົ່ວຄາວ, ນັກຊ່ຽວຊານການແພດໄດ້ກວດສອບຂໍ້ມູນຂອງວັກຊີນ ແລະ ພົບວ່າຜົນປະໂຫຍດຂອງວັກຊີນຊະນິດນີ້ມີຫຼາຍກວ່າ ຄວາມສ່ຽງທີ່ມີພຽງເລັກນ້ອຍເທົ່ານັ້ນ. ບັນຫາການແຂງຕົວຂອງເລືອດແມ່ນ ປິ່ນປົວໄດ້, ແຕ່ວ່າແພດຕ້ອງຮູ້ຈັກວິທີກວດ, ວິທີການລາຍງານ, ແລະ ວິທີການປິ່ນປົວ.

## ຮັບການສັກຢາວັກຊີນ ຈອນສັນ ແອນ ຈອນສັນ

- ສິ່ງທີ່ສຳຄັນແມ່ນ ຜູ້ຍິງ, ໂດຍສະເພາະຜູ້ທີ່ມີອາຍຸຕໍ່າກວ່າ 50 ປີ, ຄວນຮັບຊາບອາການທີ່ອາດຈະເກີດບັນຫາການແຂງຕົວຂອງເລືອດ. ພາຍຫຼັງທີ່ທ່ານໄດ້ຮັບຢາວັກຊີນສາມອາທິດ, ໃຫ້ສັງເກດອາການ:

- ຫາຍໃຈຖີ່
- ເຈັບໜ້າເອິກ
- ຂາໄຄ່
- ເຈັບໜ້າທ້ອງ/ເຈັບທ້ອງແບບບໍ່ເຊົາຈັກເທື່ອ
- ເຈັບຫົວຮຸນແຮງ ຫຼື ເຈັບຫົວແບບບໍ່ເຊົາຈັກເທື່ອ
- ຕາມົວ
- ເກີດຮອຍຊ້ຳໄດ້ງ່າຍ ຫຼື ຕຸ່ມເລືອດນ້ອຍໆ ຢູ່ກ້ອງຜິວໜັງໃນບໍລິເວນ ທີ່ສັກຢາ

- ຖ້າທ່ານມີອາການເຫຼົ່ານີ້, ໃຫ້ໄປຫ້ອງສຸກເສີນ ຫຼື ປິ່ນປົວຢ່າງຮີບດ່ວນ. ບອກໃຫ້ຜູ້ສະໜອງທາງການແພດຂອງທ່ານວ່າທ່ານຫາກໍ່ໄດ້ຮັບ ວັກຊີນຈອນສັນ ແອນ ຈອນສັນ.
- ອາການເຫຼົ່ານີ້ຈະໃຊ້ເວລາດົນໃນການສະແດງອາການ ແລະ ມີອາການຮຸນແຮງກວ່າຜົນຂ້າງຄຽງປົກກະຕິ, ຊຶ່ງມັນຈະເກີດຂຶ້ນໜຶ່ງຫາ ສອງວັນ ຫຼັງຈາກທີ່ທ່ານໄດ້ສັກຢາວັກຊີນ ແລະ ຈະໃຊ້ເວລາສອງສາມວັນ ຈຶ່ງຈະຫາຍໄປ.

**ຖ້າທ່ານໄດ້ຮັບຢາວັກຊີນຈອນສັນ ແອນ ຈອນສັນ ຫຼາຍກວ່າໜຶ່ງເດືອນ ຜ່ານມາ, ທ່ານຈະບໍ່ເກີດອາການແບບນີ້.**

## ທຸກໆຊຸມຊົນສາມາດເຂົ້າເຖິງວັກຊີນໂຄວິດ-19 ໄດ້ທັງໝົດ

ທຸກຄົນໃນລັດມິນີໂຊຕ້າມີສິດເລືອກວ່າພວກເຂົາຄວນຈະໄດ້ຮັບວັກຊີນຊະນິດໃດ.

ທຸກຊຸມຊົນສາມາດເຂົ້າເຖິງວັກຊີນທັງສາມວັກຊີນໄດ້ຈາກສະຖານທີ່ສັກຢາ ວັກຊີນຫຼາຍແຫ່ງ. ທ່ານສາມາດເຂົ້າເບິ່ງທາງອອນລາຍໄດ້ຕະຫຼອດເວລາ ຫຼື ໂທ ແລະ ສອບຖາມວ່າ ມີວັກຊີນຊະນິດໃດມີຢູ່ໃນຄຣີນິກທີ່ສັກຢາວັກຊີນ.

# ຄວາມສ່ຽງ ແລະ ຜົນປະໂຫຍດທີ່ໄດ້ຮັບ

**ຜົນດີຂອງວັກຊີນຈອນສັນ ແອນ ຈອນສັນມີຫຼາຍກວ່າຄວາມສ່ຽງທີ່ມີພຽງ ເລັກນ້ອຍ.**

**ຄວາມສ່ຽງ:** ຜູ້ຍິງທີ່ມີອາຍຸ ນ້ອຍກວ່າ 50 ປີຄວນຈະຮັບຊາບເຖິງ ຄວາມສ່ຽງທີ່ອາດຈະເກີດຂຶ້ນເລັກນ້ອຍຂອງບັນຫາການແຂງຕົວຂອງເລືອດ. ຄວາມສ່ຽງນີ້ຂ້ອນຂ້າງຈະບໍ່ເກີດຂຶ້ນກັບຜູ້ຍິງທີ່ມີອາຍຸ 50 ປີຂຶ້ນໄປ ແລະ ຜູ້ຊາຍທຸກໄວ.

**ຜົນດີ:** ວັກຊີນຈອນສັນ ແອນ ຈອນສັນ ແມ່ນມີປະສິດທິພາບດີໃນການປ້ອງກັນພະຍາດຮຸນແຮງ, ການປິ່ນປົວໃນໂຮງໝໍ, ແລະ ການເສຍຊີວິດ ຈາກໂຄວິດ-19. ໃຊ້ພຽງແຕ່ເຂັມດຽວໃນການປ້ອງກັນຢ່າງເຕັມປະສິດທິພາບ. ມັນແມ່ນເຄື່ອງມືທີ່ສຳຄັນເພື່ອຊ່ວຍໃນການສິ້ນສຸດການລະບາດ ຂອງໂຄວິດ-19.

## ວັກຊີນທີ່ປອດໄພ

ວັກຊີນໂຄວິດ-19, ລວມທັງ ຈອນສັນ ແອນ ຈອນສັນ, ໄດ້ມີການພັດທະນາຢ່າງວ່ອງໄວກວ່າ ເນື່ອງຈາກມີເງິນທຶນ ແລະ ຊັບພະຍາກອນພິເສດ ແລະ ການຄົ້ນຄ້ວາກ່ອນໜ້ານີ້. ສິ່ງສຳຄັນແມ່ນຮູ້ຈັກວ່າ ຂັ້ນຕອນໃນການ ກວດກາຄວາມປອດໄພແມ່ນບໍ່ຖືກມອງຂ້າມ. ການມີຢາວັກຊີນໂຄວິດ-19 ທີ່ປອດໄພທີ່ໄດ້ຜົນແມ່ນສິ່ງທີ່ສຳຄັນທີ່ສຸດ. ນັກວິໄຈທາງການແພດຕ້ອງໄດ້ ພິສູດວ່າຂໍ້ມູນການສຶກສາວັກຊີນສະແດງໃຫ້ເຫັນວ່າວັກຊີນແມ່ນມີຄວາມປອດໄພ ແລະ ໄດ້ຜົນດີກ່ອນທີ່ຈະໄດ້ຮັບການອະນຸມັດໃຫ້ນຳໃຊ້.

- ເຈົ້າໜ້າທີ່ສາທາລະນະສຸກໄດ້ໃຊ້ລະບົບຕ່າງໆຫຼາຍລະບົບໃນການ ຕິດຕາມວັກຊີນໂຄວິດ-19 ທັງໝົດ ເພື່ອຄວາມປອດໄພພາຍຫຼັງທີ່ໄດ້ຮັບ ການອະນຸມັດຈາກກົມອາຫານ ແລະ ຢາ.
- ລະບົບເຫຼົ່ານີ້ສາມາດກວດພົບ ຖ້າວ່າເຄີຍມີຜົນຂ້າງຄຽງທີ່ບໍ່ຄ່ອຍເກີດຂຶ້ນທີ່ບໍ່ຖືກພົບໃນລະຫວ່າງການທົດລອງທາງຄຣີນິກຫຼືບໍ່.
- ຜູ້ຊ່ຽວຊານກວດສອບ ແລະ ແກ້ໄຂຂໍ້ກັງວົນດ້ານຄວາມປອດໄພທັນທີ.

ພວກເຮົາແນະນຳໃຫ້ທຸກຄົນຮັບຢາວັກຊີນເມື່ອພວກເຂົາມີໂອກາດ. ຊ່ຽວຊານຢືນຢັນວ່າວັກຊີນໂຄວິດ-19 ຊ່ວຍໃນການປ້ອງກັນພະຍາດໂຄວິດ-19 ໄດ້, ໂດຍສະເພາະການເຈັບປ່ວຍທີ່ຮຸນແຮງ ແລະ ເສຍຊີວິດ.



## ມີຄຳຖາມບໍ່?

ສິ່ງໜຶ່ງທີ່ຄວນຈະເຮັດເມື່ອມີຄຳຖາມກ່ຽວກັບຢາວັກຊີນ ແມ່ນເວົ້າກັບທ່ານໝໍສ່ວນຕົວທີ່ປິ່ນປົວ ຫຼື ຜູ້ໃຫ້ບໍລິການທາງການແພດຂອງທ່ານ. ພວກເຂົາສາມາດໃຫ້ຂໍ້ມູນ ແລະ ຊ່ວຍໃຫ້ທ່ານເອົາຂໍ້ມູນດັ່ງກ່າວໄປນຳໃຊ້ໃນຊີວິດ ແລະ ສະພາບການຂອງທ່ານເອງ. ຖ້າວ່າວັກຊີນ ຈອນສັນ ແອນ ຈອນສັນ ບໍ່ເໝາະສົມສຳລັບທ່ານ, ມີວັກຊີນໂຄວິດ-19 ຊະນິດອື່ນທີ່ເປັນຕົວເລືອກ ໃຫ້ທ່ານ ໂດຍທີ່ຍັງບໍ່ພົບຄວາມສ່ຽງຂອງການແຂງຕົວຂອງເລືອດ.

MINNESOTA

mn.gov/vaccine

Minnesota Department of Health | health.mn.gov | 651-201-5000 |625 Robert Street North PO Box 64975, St. Paul, MN 55164-0975
ຕິດຕໍ່ health.communications@state.mn.us ເພື່ອຂໍຂໍ້ມູນໃນຮູບແບບອື່ນ. (Lao)

5/28/2021